**ມິຊຊາອາທິດທີ 16 ການົດທຳມະດາ ປີ B**
**ວັນອາທິດທີ 22 ກໍລະກົດ 2018**



**ພຣະວໍລະສານໂດຍນັກບຸນມັກໂກ 6, 30-34**

ໃນເວລານັ້ນ, ເມື່ອສິ້ນພາລະກິດແລ້ວ, ພວກອັກຄະສາວົກກໍມາໂຮມກັນຢູ່ໃກ້ພຣະເຢຊູເຈົ້າແລະລາຍງານເຖິງສິ່ງທີ່ໄດ້ກະທຳແລະໄດ້ສັ່ງສອນ. ພຣະອົງກ່າວກັບພວກເຂົາວ່າ: ຈົ່ງພາກັນໄປພັກຜ່ອນຢູ່ບ່ອນງຽບສະງັດກັບເຮົາຈັກໜ່ອຍຕ່າງຫາກ.

ຕາມຈິງຈຳນວນຄົນໄປໆມາໆມີຈຳນວນມາກມາຍຈົນພວກເຂົາບໍ່ມີເວລາຮັບອາຫານ. ດັ່ງນີ້ຈຶ່ງພາກັນລົງເຮືອໄປບ່ອນງຽບສະງັດຕ່າງຫາກ. ຝູງຊົນເຫັນພຣະອົງແລະພວກສາວົກຈາກໄປ ແລະຫລາຍຄົນກໍຮູ້ບ່ອນທີ່ຈະໄປ. ພວກເຂົາຈຶ່ງພາກັນແລ່ນໄປທາງບົກຈາກເມືອງຕ່າງໆແລະໄປຮອດບ່ອນກ່ອນ.

ເມື່ອສະເດັດຂຶ້ນຈາກເຮືອ ພຣະອົງແລເຫັນຝູງຄົນເປັນຈຳນວນມາກຈຶ່ງເກີດມີຄວາມເວດທະນາສົງສານ. ຍ້ອນວ່າພວກເຂົາເປັນດັ່ງຝູງແກະທີ່ຂາດນາຍຊຸມພາບານ. ພຣະອົງເລີຍເລີ່ມຕົ້ນສັ່ງສອນພວກເຂົາຢ່າງຍືດຍາວ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 6, 30-34**

ເມື່ອພວກສາວົກຂອງພຣະເຢຊູເຈົ້າສິ້ນສຸດພາລະກິດແຫ່ງການປະກາດອານາຈັກຂອງພຣະເຈົ້າແລ້ວ, ພວກເຂົາໄດ້ກັບມາຫາພຣະເຢຊູເຈົ້າດ້ວຍຄວາມປິຕິຍິນດີ ແລະເລົ່າທຸກສິ່ງຢ່າງໃຫ້ພຣະອົງຊາບ. ແທນທີ່ພຣະເຢຊູເຈົ້າຈະຊົມເຊີຍແລະຍ້ອງຍໍສິ່ງທີ່ພວກເຂົາກະທຳ, ພຣະອົງພັດບອກໃຫ້ພວກເຂົາໄປພັກຜ່ອນໃນບ່ອນງຽບສະງັດ ອັນເປັນສະຖານທີ່ສຳລັບການພາວະນາ, ການພົບປະສົນທະນາກັບພຣະເຈົ້າ. ເໝືອນດັ່ງພຣະເຢຊູເຈົ້າເອງ, ທຸກຄັ້ງກ່ອນທີ່ພຣະອົງຈະເລີ່ມພາລະກິດການເທດສອນ ພຣະອົງກໍອອກໄປບ່ອນງຽບສະງັດເພື່ອສວດມົນພາວະນາ. ແລະເມື່ອສິ້ນພາລະກິດເທດສະໜາແລ້ວ ພຣະອົງກໍອອກໄປທີ່ປ່ງວເພື່ອພາວະນາກັບພຣະບິດາເຈົ້າ. ແລະໃນວັນນີ້, ພຣະເຢຊູເຈົ້າກໍສອນພວກສາວົກຂອງພຣະອົງໃຫ້ກະທຳດັ່ງດຽວກັນ.

ແນ່ນອນເມື່ອພວກສາວົກປະສົບຜົນສຳເລັດໃນວຽກງານການປະກາດອານາຈັກຂອງພຣະເຈົ້າແລະປິ່ນປົວຄົນເຈັບປ່ວຍ, ພວກເຂົາຍ່ອມມີຄວາມພາກພູມໃຈໃນພາລະກຳລັງແລະຄວາມສາມາດຂອງຕົນ. ໃນເວລາດຽວກັນພວກເຂົາກໍລືມໄປວ່າມີພຣະເຈົ້າຢູ່ຄຽງຂ້າງພວກເຂົາ, ພຣະອົງປະຕິບັດວຽກງານພ້ອມກັບພວກເຂົາ. ດັ່ງນັ້ນ, ການພັກຜ່ອນໃນບ່ອນງຽບສະງັດຈຶ່ງເປັນໂອກາດໃຫ້ພວກເຂົາໄດ້ເຫັນເຖິງສິ່ງມະຫັດສະຈັນຕ່າງໆທີ່ພຣະເຈົ້າກະທຳຜ່ານທາງພວກເຂົາ.

ສຳລັບພວກເຮົາຜູ້ເປັນກຣິສຕັງ, ເປັນລູກສິດຂອງພຣະເຈົ້າກໍເຊັ່ນດຽວກັນ, ພວກເຮົາຕ້ອງການເວລາເພື່ອພັກຜ່ອນໃນພຣະເຈົ້າ, ເພື່ອເບິ່ງຄືນຊີວິດຂອງພວກເຮົາໃນແຕ່ລະວັນ, ເບິ່ງຄືນພາລະໜ້າທີ່ຊຶ່ງພຣະເຈົ້າໄດ້ມອບໝາຍໃຫ້ພວກເຮົາໃນແຕ່ລະມື້. ເບິ່ງຄືນຈຸດດີແລະຈຸດທີ່ຍັງບົກຜ່ອງໃນຊີວິດຂອງພວກເຮົາ. ເມື່ອພວກເຮົາມີໂອກາດທົບທວນຊີວິດຂອງຕົນດັ່ງນີ້ແລ້ວ, ພວກເຮົາຈະເຫັນວ່າບໍ່ແມ່ນພວກເຮົາເອງທີ່ກະທຳສິ່ງຕ່າງໆ ແຕ່ແມ່ນພຣະເຈົ້າທີ່ໄດ້ຊ່ວຍພວກເຮົາ, ພຣະອົງກະທຳຜ່ານທາງພວກເຮົາ. ແລະຖ້າບໍ່ມີພຣະອົງແລ້ວ ພວກເຮົາບໍ່ສາມາດກະທຳສິ່ງໃດໄດ້ເລີຍ.

ນີ້ແລ, ວັນອາທິດສຳລັບພວກເຮົາທີ່ເຊື່ອໃນພຣະເຈົ້າ, ຈຶ່ງເປັນວັນພັກຜ່ອນ, ວັນສັກສິດ. ຍ້ອນພວກເຮົາມີໂອກາດມາຫາພຣະເຈົ້າ, ມາພັກຜ່ອນໃນພຣະອົງ, ມາໂມທະນາຄຸນພຣະອົງສຳລັບທຸກສິ່ງຢ່າງທີ່ພຣະອົງໄດ້ປະທານໃຫ້ພວກເຮົາໃນອາທິດໜຶ່ງທີ່ຜ່ານມາ. ແລະກໍເປັນໂອກາດໃຫ້ພວກເຮົາໄດ້ໂອ້ລົມສົນທະນາກັບພຣະເຈົ້າ, ໄດ້ຂໍໂທດນຳພຣະອົງສຳລັບສິ່ງທີ່ຍັງຂາດຕົກບົກຜ່ອງ. ເພື່ອພວກເຮົາຈະໄດ້ພ້ອມກັບພຣະອົງສືບຕໍ່ຊີວິດພາລະກິດໃນອາທິດທີ່ຈະມາເຖິງ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຄວາມສຳຄັນຂອງການພັກຜ່ອນໃນພຣະເຈົ້າ, ການພົບປະສົນທະນາກັບພຣະອົງໃນຄຳພາວະນາ, ໃນວາຈາຂອງພຣະອົງແລະເປັນຕົ້ນໃນມະຫາບູຊາມິຊຊາອັນແມ່ນຈຸດສຸດຍອດແຫ່ງຊີວິດກຣິສຕະຊົນຂອງພວກເຮົາ. ເພື່ອພວກເຮົາຈະໄດ້ພົບກັບຄວາມທຸເລົາບັນເທົາຢ່າງແທ້ຈິງໃນພຣະເຢຊູກຣິສໂຕເຈົ້າ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ